Australian Government

COVID-19 VACCINATION

# ເປັນຫຍັງນາຍຈ້າງທີ່ບ້ານພັກດູແລຜູ້ສູງອາຍຸ ຈຶ່ງຖາມຂ້ອຍວ່າ ຂ້ອຍໄດ້ສັກຢາວັກຊີນຕ້ານ COVID-19 ແລ້ວຫຼືຍັງ?

ຂໍ້ມູນຖືກຕ້ອງ ວັນທີ 4 ມິຖຸນາ 2021

ການສັກຢາວັກຊີນເປັນການປົກປ້ອງຈາກ COVID-19 ທີ່ໄດ້ຜົນດີທີ່ສຸດ. ການປົກປ້ອງຜູ້ອາໄສຢູ່ໃນບ້ານພັກດູແລຜູ້ສູງອາຍຸແລະຜູ້ທີ່ດູແລເຂົາເຈົ້າແມ່ນບູລິມະສິດຢ່າງໜຶ່ງ.

ເພາະສະນັ້ນຈຶ່ງເປັນສິ່ງສຳຄັນທີ່ລັດຖະບານແລະຜູ້ໃຫ້ບໍລິການທີ່ບ້ານພັກດູແລຜູ້ສູງອາຍຸຕ້ອງຮູ້ວ່າມີພະນັກງານດູແລຜູ້ສູງອາຍຸຈັກຄົນແລ້ວທີ່ໄດ້ຮັບການສັກຢາວັກຊີນຕ້ານ COVID-19. ຂໍ້ມູນນີ້ຈະຊ່ວຍໃຫ້ເຂົ້າໃຈຄວາມສ່ຽງທີ່ມີຕໍ່ຜູ້ອາໄສ ແລະພະນັກງານທີ່ດູແລເຂົາເຈົ້າ, ເພື່ອກະກຽມແລະຮັບມືກັບການແຜ່ລະບາດຂອງ COVID-19.

ຖ້າວ່າເກີດມີການແຜ່ລະບາດຂອງ COVID-19 ຂຶ້ນ ຢູ່ໃນສະຖານທີ່ບໍລິການຂອງທ່ານ, ມັນຈະເປັນສິ່ງສຳຄັນທີ່ຕ້ອງຮູ້ວ່າມີພະນັກງານຈັກຄົນທີ່ໄດ້ສັກຢາວັກຊີນແລ້ວເພື່ອວ່າຈະໄດ້ວາງວິທີການປົກປ້ອງໃຫ້ແກ່ຜູ້ທີ່ຍັງບໍ່ທັນໄດ້ຮັບການສັກຢາ ວັກຊີນເທື່ອ.

ກອງທະບຽນບັນທຶກການສັກຢາປ້ອງກັນພະຍາດແຫ່ງປະເທດອອສເຕຣເລັຍໄດ້ບັນທຶກປະຫວັດການສັກວັກຊີນຂອງທຸກໆຄົນ. ແຕ່ວ່າບັນທຶກນີ້ບໍ່ໄດ້ລວມເອົາຂໍ້ມູນກ່ຽວກັບວຽກງານທີ່ທ່ານເຮັດຫຼືໃຜເປັນນາຍຈ້າງຂອງທ່ານ.

ລັດຖະບານອອສເຕຣເລັຍກຳລັງແນະນຳວິທີລາຍງານແບບໃໝ່ໃຫ້ແກ່ພາກສ່ວນບໍລິການບ້ານພັກດູແລຜູ້ສູງອາຍຸ, ແລະບໍລິການດູແລຜູ້ສູງອາຍຸຢູ່ໃນເຮືອນແລະໃນຊຸມຊົນ, ເພື່ອຈຸດປະສົງດັ່ງກ່າວນີ້. ປັດຈຸບັນ ກໍໄດ້ມີຕົວແບບລາຍງານໄວ້ໃຫ້ແກ່ຜູ້ໃຫ້ບໍລິການເພື່ອນຳມາໃຊ້ແບບສະໝັກໃຈແລ້ວ ໂດຍຜ່ານ My Aged Care.

ໃນຂະນະທີ່ການລາຍງານຈະເປັນແບບສະໝັກໃຈໃນລະຍະຕົ້ນນີ້, ຜູ້ໃຫ້ບໍລິການທີ່ຖືກອະນຸມັດໄດ້ຖືກຊຸກຍູ້ໃຫ້ເລີ່ມການລາຍງານປະຈຳອາທິດດຽວນີ້ໂລດ ກ່ຽວກັບ:

- ຈຳນວນທັງໝົດຂອງພະນັກງານຢູ່ໃນບ້ານພັກດູແລຜູ້ສູງອາຍຸແຕ່ລະແຫ່ງ
- ຈຳນວນທັງໝົດຂອງພະນັກງານຢູ່ໃນບ່ອນບໍລິການແຕ່ລະແຫ່ງເຊິ່ງໄດ້ຮັບການສັກຢາວັກຊີນຕ້ານ COVID-19 ໂດສດຽວ
- ຈ ໍານວນທັງໝົດຂອງພະນັກງານຢູ່ໃນບ່ອນບໍລິການແຕ່ລະແຫ່ງທີ່ໄດ້ຮັບການສັກຢາວັກຊີນຕ້ານ COVID-19 ຄົບຕາມຈຳນວນໂດສໂດຍສົມບູນແລ້ວ.

ນັບຈາກວັນທີ 15 ມິຖຸນາ 2021 ເປັນຕົ້ນໄປ, ການລາຍງານຈະກາຍມາເປັນກົດລະບຽບທີ່ຕ້ອງປະຕິບັດສໍາລັບບ້ານພັກດູແລຜູ້ສູງອາຍຸທີ່ຖືກອະນຸມັດ. ສ່ວນບໍລິການດູແລຜູ້ສູງອາຍຸໃນເຮືອນແລະໃນຊຸມຊົນນັ້ນ ການລາຍງານນີ້ກໍຈະກາຍມາເປັນກົດລະບຽບທີ່ຕ້ອງປະຕິບັດພາຍໃນບໍ່ພໍເທົ່າໃດອາທິດທີ່ຈະມາເຖິງນີ້.

### ອັນນີ້ຈະມີຜົນກະທົບຕໍ່ຂ້ອຍຢ່າງໃດ?

ບ່ອນເຮັດວຽກຂອງທ່ານຈະປຶກສາກັບທ່ານວ່າເຂົາເຈົ້າຈະເກັບກໍາແລະລາຍງານຂໍ້ມູນໂດຍວິທີໃດ ກ່ຽວກັບຈໍານວນພະນັກງານທີ່ຢູ່ໃນສະຖານທີ່ບໍລິການ ເຊິ່ງໄດ້ຮັບການສັກຢາວັກຊີນຕ້ານ COVID-19 ເຂັມດຽວແລະຈໍານວນຂອງຜູ້ທີ່ໄດ້ສັກຄົບຈໍານວນແລ້ວ.

ເປັນສິ່ງສໍາຄັນທີ່ທ່ານຕ້ອງຮູ້ວ່າການສັກຢາຕ້ານ COVID-19 ແມ່ນສິ່ງສະໝັກໃຈ. ເປັນທາງເລືອກຂອງທ່ານເອງທີ່ຈະຕັດສິນໃຈສັກຢາວັກຊີນຕ້ານ COVID-19 ຫຼືບໍ່ສັກ. ເປັນທາງເລືອກຂອງທ່ານທີ່ຈະບອກໃຫ້ນາຍຈ້າງຂອງທ່ານຮູ້ວ່າທ່ານໄດ້ສັກຢາວັກຊີນຕ້ານ COVID-19 ແລ້ວຫຼືຍັງບໍ່ທັນໄດ້ສັກ. ພ້ອມດຽວກັນ ກໍເປັນສິ່ງສໍາຄັນທີ່ທ່ານຕ້ອງເຂົ້າໃຈເຫດຜົນວ່າຂໍ້ມູນທີ່ເກັບກໍາໄປນັ້ນກໍແມ່ນເພື່ອເປັນການປົກປ້ອງຜູ້ທີ່ທ່ານດູແລຢູ່ນັ້ນເອງ.

### ມີຂໍ້ມູນຫຍັງແດ່ທີ່ບ່ອນເຮັດວຽກຂອງຂ້ອຍອາດຈະເກັບກໍາແລະລາຍງານ?

ການເກັບກໍາຂໍ້ມູນແມ່ນຄ້າຍຄືກັນຫຼາຍກັບວິທີທີ່ນາຍຈ້າງຂອງທ່ານບັນທຶກຈໍານວນຂອງພະນັກງານທີ່ໄດ້ຮັບການສັກຢາກັນໄຂ້ຫວັດໃຫຍ່ ໃນປັດຈຸບັນນັ້ນເອງ.

ບ່ອນເຮັດວຽກຂອງທ່ານອາດຈະສະໜອງຂໍ້ມູນດັ່ງຂ້າງລຸ່ມນີ້ໃຫ້ກັບທາງກະຊວງສາທາລະນະສຸກ:

- ຈໍານວນທັງໝົດຂອງພະນັກງານຢູ່ໃນບ້ານພັກດູແລຜູ້ສູງອາຍຸແຕ່ລະແຫ່ງ
- ຈໍານວນທັງໝົດຂອງພະນັກງານຢູ່ໃນບ່ອນບໍລິການແຕ່ລະແຫ່ງເຊິ່ງໄດ້ຮັບການສັກຢາວັກຊີນຕ້ານ COVID-19 ໂດສດຽວ
- ຈໍານວນທັງໝົດຂອງພະນັກງານຢູ່ໃນບ່ອນບໍລິການແຕ່ລະແຫ່ງທີ່ໄດ້ຮັບການສັກຢາວັກຊີນຕ້ານ COVID-19 ຄົບຕາມຈໍານວນແລ້ວ.

ຂໍ້ມູນທີ່ບ່ອນເຮັດວຽກຂອງທ່ານນໍາໄປລາຍງານນັ້ນຈະບໍ່ລະບຸສ່ວນຕົວບຸກຄົນໃດໆ.

ການລາຍງານຈະລວມເອົາພະນັກງານທັງໝົດ (ລວມເຖິງຜູ້ເຮັດວຽກອາສາສະໝັກ) ທີ່ເຮັດວຽກຢູ່ສະຖານທີ່ບ້ານພັກດູແລຜູ້ສູງອາຍຸ ທີ່ຮັບຜິດຊອບໃຫ້ການດູແລ, ອູ້ມຊູ ແລະ ບໍລິການຕ່າງໆແກ່ຜູ້ອາໄສ, ແລະການຮັກສາແລະການປົກຄອງ. ອັນນີ້ ລວມເຖິງພະຍາບານ ແລະ ພະນັກງານດູແລສ່ວນຕົວ, ບັນດາແພດດູແລສຸຂະພາບໃນເຄືອຂ່າຍ, ພະນັກງານເຮັດວຽກປົກຄອງ, ພະນັກງານໃນເຮືອນຄົວ, ບ່ອນຊັກເຄື່ອງ ແລະ ເຮັດສວນ.

## ຂ້ອຍຕ້ອງບອກໃຫ້ນາຍຈ້າງຂອງຂ້ອຍຮູ້ບໍຖ້າຂ້ອຍໄດ້ສັກຢາວັກຊີນຕ້ານ COVID-19 ແລ້ວ?

ບໍ່. ເປັນທາງເລືອກຂອງທ່ານເອງ ແຕ່ວ່າທ່ານໄດ້ຖືກຊຸກຍູ້ໃຫ້ແບ່ງປັນຂໍ້ມູນນີ້ກັບນາຍຈ້າງຂອງທ່ານເຊິ່ງແມ່ນພາກສ່ວນໜຶ່ງຂອງການກະກຽມແລະວາງແຜນຢູ່ໃນສະຖານທີ່ເຮັດວຽກຂອງທ່ານ.

ເປັນທີ່ຄາດວ່ານາຍຈ້າງຂອງທ່ານຈະທໍາການໂອ້ລົມກັບທ່ານແບບໃຫ້ກຽດເຊິ່ງກັນແລະກັນ ໃນການ:

- ອະທິບາຍວ່າເປັນຫຍັງເຂົາເຈົ້າຈຶ່ງຂອກຫາຂໍ້ມູນກ່ຽວກັບການສັກຢາຕ້ານCOVID-19 ໃນກຸ່ມພະນັກງານ
- ໝັ້ນໃຈວ່າທ່ານເຂົ້າໃຈວ່າເປັນທາງເລືອກຂອງທ່ານໃນການໄປຮັບການສັກຢາຕ້ານ COVID-19
- ໝັ້ນໃຈວ່າທ່ານເຂົ້າໃຈວ່າຂໍ້ມູນສ່ວນຕົວຂອງທ່ານຈະຖືກປົກປ້ອງ, ແລະ
- ໝັ້ນໃຈວ່າທ່ານຮູ້ວ່າເປັນສິດຂອງທ່ານໃນການທີ່ຈະປະຕິເສດໃນການໃຫ້ຂໍ້ມູນນີ້.

## ຂ້ອຍຕ້ອງສະແດງຫຼັກຖານຂອງການສັກຢາວັກຊີນຕ້ານ COVID-19 ຂອງຂ້ອຍບໍຖ້າຂ້ອຍຍິນດີແບ່ງປັນຂໍ້ມູນນີ້ກັບນາຍຈ້າງຂອງຂ້ອຍ?

ບໍ່. ມັນເປັນທາງເລືອກຂອງທ່ານເອງ. ນາຍຈ້າງຂອງທ່ານຈະປຶກສາກັບທ່ານວ່າເຂົາເຈົ້າຈະທໍາການບັນທຶກການສັກຢາຕ້ານ COVID-19 ຂອງທ່ານວິທີໃດ, ຖ້າທ່ານຍິນດີແບ່ງປັນຂໍ້ມູນນີ້ກັບເຂົາເຈົ້າ. ສໍາລັບພະນັກງານທີ່ຍິນດີ, ທ່ານອາດຈະສະເໜີຂໍ້ມູນດັ່ງຂ້າງລຸ່ມນີ້ໃຫ້ນາຍຈ້າງຂອງທ່ານ:

- ໃບຢັ້ງຢືນການສັກຢາວັກຊີນຫຼືຫຼັກຖານຢ່າງອື່ນຈາກຜູ້ສັກຢາໃຫ້ທ່ານ, ຫຼື
- ໃບແຈ້ງປະຫວັດການສັກຢາກັນພະຍາດເຊິ່ງທ່ານສາມາດເຂົ້າໄປເອົາໄດ້ຈາກMedicare ທາງອອນລາຍນ໌ ຫຼືຈາກ Express Plus Medicare ທາງແອັບມືຖື.

ນອກນີ້, ທ່ານກໍສາມາດທີ່ຈະພິຈະລະນາໃຫ້:

- ຄໍາປະຕິຍານທີ່ຕົນເຊັນຮັບ, ຫຼື
- ບັນທຶກຈາກແພດປິ່ນປົວສຸຂະພາບ.

## ຂ້ອຍຈະໄປເອົາຂໍ້ມູນໄດ້ຢູ່ໃສເພື່ອຊ່ວຍໃຫ້ຂ້ອຍຕັດສິນໃຈກ່ຽວກັບການສັກວັກຊີນຕ້ານ COVID-19?

ສະຖານທີ່ເຮັດວຽກຂອງທ່ານໄດ້ຮັບ ຂໍ້ມູນແລະເອກະສານເພື່ອອຸ້ມຊູພະນັກງານ ຢ່າງກວ້າງຂວາງໃນການຕັດສິນໃຈກ່ຽວກັບການສັກຢາຕ້ານ COVID-19, ແລະເພື່ອຊ່ວຍໃຫ້ພະນັກງານຮູ້ວ່າເຂົາເຈົ້າຈະໄປສັກວັກຊີນໄດ້ຢູ່ໃສ. ອັນນີ້ ລວມເຖິງຂໍ້ມູນທີ່ແປໄວ້ແລ້ວ 19 ພາສາ. ນອກນີ້ ທ່ານຍັງສາມາດເອົາຂໍ້ມູນເຫຼົ່ານີ້ໄດ້ທີ່ເວັບໄຊ້ **health.gov.au.** ເປັນສິ່ງສໍາຄັນທີ່ທ່ານຕ້ອງເຂົ້າໄປແຫຼ່ງຂໍ້ມູນກ່ຽວກັບການສັກວັກຊີນຕ້ານCOVID-19 ທີ່ເຊື່ອຖືແລະໄວ້ໃຈໄດ້, ເພື່ອໃຫ້ຮູ້ວ່າເປັນຫຍັງການສັກວັກຊີນຈຶ່ງສໍາຄັນແລະຈະໄປຮັບການສັກວັກຊີນໄດ້ຢ່າງໃດ.

**ສໍາລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ຫາກະຊວງສາທາລະນະສຸກທີ່**
**ອີເມລ: AgedCareCOVIDLiaison@health.gov.au ຫຼືຕິດຕໍ່ຫາຢູນຽນຂອງທ່ານເພື່ອຂໍຄໍາແນະນໍາແລະການອູ້ມຊູ.**